**ຜ-ຟຟລ ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນຄຸ້ມຄອງ ບໍລິຫານດີເດັ່ນ ປະຈໍາປີ 2023 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ"**

ໃນວັນທີ 07 ທັນວາ 2023, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ເຂົ້າຮ່ວມງານ "ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນຄຸ້ມຄອງບໍລິຫານດີເດັ່ນປະຈໍາປີ 2023 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ຫຼື ຕລຊລ **(LSX Disclosure and Corporate Governance Award 2023)".**

ພິທີມອບຮັບລາງວັນໃນປີນີ້ ແມ່ນເພື່ອເປັນການສະຫຼຸບຕີລາຄາຍ້ອງຍໍຜົນງານການເປີດເຜີຍຂໍ້ມູນ ແລະ ການຄຸ້ມຄອງບໍລິຫານດີເດັ່ນ ຂອງບໍລິສັດຈົດທະບຽນໃນ ຕລຊລ ຕະຫຼອດໄລຍະປີ 2023 ທີ່ຕ້ອງໄດ້ປະຕິບັດວຽກງານການເປີດເຜີຍຂໍ້ມູນໃຫ້ແກ່ບັນດາຜູ້ລົງທຶນ ແລະ ມວນຊົນຮັບຊາບເປັນປະຈໍາ. ນອກຈາກນັ້ນຍັງໄດ້ມີການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ ຜ-ຟຟລ. ການມອບຮັບລາງວັນດັ່ງກ່າວ. ຍັງເປັນການກະຕຸກຊຸກຍູ້ໃຫ້ບັນດາບໍລິສັດຈົດທະບຽນໄດ້ປະຕິບັດການລາຍງານ ແລະ ເປີດເຜີຍຂໍ້ມູນໃຫ້ສືບຕໍ່ເປັນປົກກະຕິຕໍ່ເນື່ອງເພື່ອສ້າງຄວາມເຊື່ອໝັ້ນແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ. ໃນປີ 2023 ຜ-ຟຟລ ແມ່ນໄດ້ລາງວັນຄື: **"ການເປີດເຜີຍຂໍ້ມູນດີເດັ່ນປະເພດ 1", ແລະ "ການຄຸ້ມຄອງບໍລິຫານດີເດັ່ນປະເພດ 2".** ເຊິ່ງ ທ່ານ ດາວວຽງ ສຸນັນທະລາດ ຮອງຜູ້ອໍານວຍການໃຫຍ່ ໄດ້ເປັນຜູ້ຕ່າງໜ້າ ບໍລິສັດ ຜ-ຟຟລ ເປັນຜູ້ຮັບລາງວັນດັ່ງກ່າວ.







